ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----=====000=====----

ສຳນັກງານ ຄຄຊ

ພະແນກຄຸ້ມຄອງຕະຫຼາດຫຼັກຊັບ

ນະຄອນຫຼວງວຽງຈັນ, ວັນທີ 26 ສິງຫາ 2014

ຮຽນ: - ທ່ານ ນາງ ວັດທະນາ ດາລາລອຍ ຫົວໜ້າ ສຳນັກງານ ຄຄຊ ທີ່ນັບຖືຢ່າງສູງ;
- ທ່ານ ນາງ ສາຍສະໝອນ ຈັນທະຈັກ ຮອງຫົວໜ້າ ສຳນັກງານ ຄຄຊ ທີ່ນັບຖືຢ່າງສູງ;
- ທ່ານ ສຸລິສັກ ທຳນຸວົງ ຮອງຫົວໜ້າ ສຳນັກງານ ຄຄຊ ທີ່ນັບຖືຢ່າງສູງ,

ເລື່ອງ: ລາຍງານສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ ປະຈຳວັນທີ 26 ສິງຫາ 2014.

ພະແນກຄຸ້ມຄອງຕະຫຼາດຫຼັກຊັບ ຂໍຖືເປັນກຽດຮຽນລາຍງານການຊື້-ຂາຍຮຸ້ນໃນ ຕະຫຼາດຫຼັກຊັບລາວ ປະຈຳວັນທີ 26/8/2014 ດັ່ງນີ້: ດັດຊະນີຕະຫຼາດຫຼັກຊັບລາວ ໃນມື້ນີ້ປິດຢູ່ທີ່ 1.416,11 ຈຸດ ຫຼຸດລົງ 0,02% ເມື່ອທຽບໃສ່ມື້ທີ່ຜ່ານມາ, ມີມູນຄ່າການຊື້-ຂາຍ 122,17 ລ້ານກີບ ຫຼຸດລົງ 68,36% ເມື່ອທຽບໃສ່ມື້ທີ່ຜ່ານມາ. ການຊື້ຂອງຜູ້ລົງທຶນພາຍໃນປະເທດ ກວມເອົາ 51,56% ຂອງມູນຄ່າການຊື້-ຂາຍທັງໝົດ. ສັງເກດເຫັນວ່າ ຜູ້ລົງທຶນຕ່າງປະເທດ (ປະເທດໄທ) ບຸກຄົນດຽວ ທີ່ມີຄວາມຕ້ອງການເທຂາຍຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ອອກ, ແຕ່ຄຳສັ່ງຊື້ເຂົ້າມາມີໜ້ອຍ ຈຶ່ງເຮັດໃຫ້ລາຄາຫຼຸດລົງແຕະເພດານຕ່ຳສຸດ ຢ່າງຕໍ່ເນື່ອງ.

ລາຄາຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ໄດ້ປິດຢູ່ທີ່ 7.800 ກີບ ເພີ່ມຂຶ້ນ 100 ກີບ ເມື່ອທຽບໃສ່ມື້ທີ່ຜ່ານມາ ແຕ່ທຽບໃສ່ມື້ເປີດຕະຫຼາດ ຫຼຸດລົງ 2,50%, ມີປະລິມານການຊື້-ຂາຍທັງໝົດ 10.494 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 81,80 ລ້ານກີບ. ອັດຕາສ່ວນການຖືຄອງ ຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,31% ຂອງຈຳນວນຮຸ້ນທັງໝົດຂອງ BCEL. **ມີຄຳສັ່ງຊື້**ທີ່ເຫຼືອຈາກການຈັບຄູ່ຈຳນວນ 12.447 ຮຸ້ນ ໃນລາຄາ 7.500-7.700 ກີບ ແລະ **ມີຄຳສັ່ງຂາຍ**ທີ່ເຫຼືອຈາກການຈັບຄູ່ຈຳນວນ 29.115 ຮຸ້ນ ໃນລາຄາ 7.800-8.000 ກີບ.

ລາຄາຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ໄດ້ປິດຢູ່ທີ່ 7.000 ກີບ ບໍ່ປ່ຽນແປງ ເມື່ອທຽບໃສ່ມື້ທີ່ຜ່ານມາ ແຕ່ທຽບໃສ່ມື້ເປີດຕະຫຼາດ ເພີ່ມຂຶ້ນ 48,94%, ມີປະລິມານການຊື້-ຂາຍທັງໝົດ 5,650 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 39,55 ລ້ານກີບ. ອັດຕາສ່ວນການຖືຄອງ ຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 14,20% ຂອງຈຳນວນຮຸ້ນທັງໝົດຂອງ EDL-Gen. **ມີຄຳສັ່ງຊື້**ທີ່ເຫຼືອຈາກການຈັບຄູ່ຈຳນວນ 15.000 ຮຸ້ນ ໃນລາຄາ 6.900-6.950 ກີບ ແລະ **ມີຄຳສັ່ງຂາຍ**ທີ່ເຫຼືອຈາກການຈັບຄູ່ຈຳນວນ 85.026 ຮຸ້ນ ໃນລາຄາ 7.000-7.200 ກີບ.

ລາຄາຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ໄດ້ປິດຢູ່ທີ່ 8.200 ກີບ ຊຶ່ງເປັນລາຄາແຕະເພດານຕ່ຳສຸດຂອງມື້ນີ້ ແລະ ຫຼຸດລົງ 400 ກີບ ເມື່ອທຽບໃສ່ມື້ທີ່ຜ່ານມາ ແຕ່ທຽບໃສ່ມື້ເປີດຕະຫຼາດ ຫຼຸດລົງ 25,45%, ມີປະລິມານການຊື້-ຂາຍທັງໝົດ 100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,82 ລ້ານກີບ. ອັດຕາສ່ວນການຖືຄອງ ຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 2,71% ຂອງຈຳນວນຮຸ້ນທັງໝົດຂອງ LWPC. **ມີຄຳສັ່ງຂາຍ**ທີ່ເຫຼືອການຈັບຄູ່ຈຳນວນ 2.755 ຮຸ້ນ ໃນລາຄາ 8.200 ກີບ ແຕ່ບໍ່**ມີຄຳສັ່ງຊື້**ເຂົ້າມາ.

ດັ່ງນັ້ນ, ຈຶ່ງຂໍຮຽນລາຍງານມາຍັງທ່ານເພື່ອຊາບ.

**ຮ-ຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ**

ທ. ບຸນຈິງ ກອງຄຳ

**ຜູ້ລາຍງານ**

ທ. ສຸລະສິດ ຍົດລືໄຊ

ຕາຕະລາງ 1 : ການເໜັງຕີງຂອງດັດສະນີຕະຫຼາດ ແລະ ການຊື້-ຂາຍ ປະຈຳວັນທີ 26 ສິງຫາ 2014

| | index ເປີດ | Index ປິດມື້ວານ | ປ່ຽນແປງ (ຈຸດ) | % ປ່ຽນ | ຈຳນວນຮຸ້ນ | ມູນຄ່າ (ກີບ) | ມື້ທີ່ຜ່ານມາ | | % ການປ່ຽນແປງ | |
|---|---|---|---|---|---|---|---|---|---|---|
| | | | | | | | ຈຳນວນຮຸ້ນ | ມູນຄ່າ (ກີບ) | ຈຳນວນຮຸ້ນ | ມູນຄ່າ |
| ຊ່ວງທີ 1 | 1,416.42 | 1,435.77 | -19.35 | -1.35 | 494 | 3,803,800 | - | - | - | - |
| ຊ່ວງທີ 2 | 1,418.36 | 1,427.06 | -8.70 | -0.61 | 1,605 | 12,519,000 | 300 | 2,115,000 | 435.00 | 491.91 |
| ຊ່ວງທີ 3 | 1,416.11 | 1,427.06 | -10.95 | -0.77 | 100 | 820,000 | - | - | - | - |
| ຊ່ວງທີ 4 | 1,416.11 | 1,452.12 | -36.01 | -2.48 | 14,045 | 105,031,000 | 840 | 6,468,000 | 1,572.02 | 1,523.86 |
| ຊ່ວງທີ 5 | 1,416.11 | 1,416.42 | -0.31 | -0.02 | - | - | 27,988 | 196,646,100 | - 100 | - 100 |
| ຊ່ວງທີ 6 | 1,416.11 | 1,416.42 | -0.31 | -0.02 | - | - | 25,837 | 180,859,000 | - 100 | - 100 |
| ລວມທັງໝົດ | | | | | 16,244 | 122,173,800 | 54,965 | 386,088,100 | - 70.45 | - 68.36 |
| BCEL | ລາຄາປັດຈຸບັນ | ປ່ຽນແປງ (ກີບ) | % ປ່ຽນ | ລາຄາປິດມື້ວານ | ຈຳນວນຮຸ້ນ | ມູນຄ່າ (ກີບ) | | | | |
| ຊ່ວງທີ 1 | 7,700 | - | - | - | 494 | 3,803,800 | - | - | - | - |
| ຊ່ວງທີ 2 | 7,800 | - | - | - | 1,605 | 12,519,000 | - | - | - | - |
| ຊ່ວງທີ 3 | - | - | - | - | - | - | - | - | - | - |
| ຊ່ວງທີ 4 | 7,800 | - | 1.30 | 7,700 | 8,395 | 65,481,000 | 840 | 6,468,000 | 899.40 | 912.38 |
| ຊ່ວງທີ 5 | - | - | -100 | 7,700 | - | - | 1,043 | 8,031,100 | - 100 | - 100 |
| ຊ່ວງທີ 6 | 7,800 | 100 | 1.30 | 7,700 | - | - | - | - | - | - |
| ລວມທັງໝົດ | | | | | 10,494 | 81,803,800 | 1,883 | 14,499,100 | 457.30 | 464.20 |
| EDL-Gen | ລາຄາ | ປ່ຽນແປງ (ກີບ) | % ປ່ຽນ | ລາຄາປິດມື້ວານ | ຈຳນວນຮຸ້ນ | ມູນຄ່າ (ກີບ) | | | | |
| ຊ່ວງທີ 1 | - | - | - | - | - | - | - | - | - | - |
| ຊ່ວງທີ 2 | - | - | -100 | 7,050 | - | - | 300 | 2,115,000 | - 100 | - 100 |
| ຊ່ວງທີ 3 | - | - | - | - | - | - | - | - | - | - |
| ຊ່ວງທີ 4 | 7,000 | - | - | - | 5,650 | 39,550,000 | - | - | - | - |
| ຊ່ວງທີ 5 | - | - | -100 | 7,000 | - | - | 26,945 | 188,615,000 | - 100 | - 100 |
| ຊ່ວງທີ 6 | 7,000 | - | - | 7,000 | - | - | 25,837 | 180,859,000 | - 100 | - 100 |
| ລວມທັງໝົດ | | | | | 5,650 | 39,550,000 | 53,082 | 371,589,000 | - 89.36 | - 89.36 |
| LWPC | ລາຄາ | ປ່ຽນແປງ (ກີບ) | % ປ່ຽນ | ລາຄາປິດມື້ວານ | ຈຳນວນຮຸ້ນ | ມູນຄ່າ (ກີບ) | | | | |
| ຊ່ວງທີ 1 | - | - | - | - | - | - | - | - | - | - |
| ຊ່ວງທີ 2 | - | - | - | - | - | - | - | - | - | - |
| ຊ່ວງທີ 3 | 8,200 | - | - | - | 100 | 820,000 | - | - | - | - |
| ຊ່ວງທີ 4 | - | - | - | - | - | - | - | - | - | - |
| ຊ່ວງທີ 5 | - | - | - | - | - | - | - | - | - | - |
| ຊ່ວງທີ 6 | 8,200 | (400) | -4.65 | 8,600 | - | - | - | - | - | - |
| ລວມທັງໝົດ | | | | | 100 | 820,000 | - | - | - | - |

ພາບເສັ້ນສະແດງດັດສະນີຕະຫຼາດຫຼັກຊັບລາວ

